# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 11 ທັນວາ 2016 (12-11-2016)

## ພຣະຄຳຂອງພຣະເຈົ້າເຕັມຢູ່ໃນໃຈ

**ຂໍ້ພຣະຄັມພີໃນບົດຮຽນ**: ເພງສັດເສີນ 119:9-11

**ຈຸດສຳຄັນໃນບົດຮຽນ**: ພຣະຄຳຂອງພຣະເຈົ້າໄດ້ສອນພວກເຮົາໃຫ້ມີຊີວິດທີ່ຢູ່ດີເປັນສຸກ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ບາງຄົນມັກວາງແຜນການເອົາໄວ້ເປັນຢ່າງດີສຳລັບໄປພັກຜ່ອນ ຄືພວກເຂົາໄດ້ຈົດເປັນລາຍການເອົາໄວ້ວ່າຈະເຮັດຫຍັງແດ່ແຕ່ລະຊົ່ວໂມງ. ແຕ່ບາງຄົນຊ້ຳພັດຄິດວ່າການວາງແຜນເອົາໄວ້ຢ່າງນັ້ນເປັນການລົບກວນຄວາມສຸກຂອງການໄປທ່ຽວ ພວກເຂົາຢາກໃຫ້ສິ່ງທີ່ເກີດຂຶ້ນນັ້ນເປັນໄປຢ່າງທັມມະຊາດເພາະບໍ່ຮູ້ແນ່ວ່າອັນໃດຈະເກີດຂຶ້ນແລະບໍ່ຮູ້ວ່າຈະເຮັດຫຍັງ ຈົນກວ່າຈະໄປເຖິງວັນເຫລົ່ານັ້ນໃນແຕ່ລະວັນ.

ສອງວິທີນີ້ແມ່ນຄົນເຮົາມັກເຮັດ ສຳລັບຂ້າພະເຈົ້າບໍ່ຢາກໃຫ້ເຮັດໄປຕາມລົມ ຫລືເຮັດໄປຕາມດວງໂດຍບໍ່ມີການວາງແຜນເອົາໄວ້ ຖ້າບໍ່ມີແຜນການເອົາໄວ້ແລ້ວພວກເຮົາຍ່ອມໄປບ່ອນບໍ່ຢາກຈະໄປ. ພວກເຮົາຮູ້ແລ້ວວ່າຄົນທີ່ມີຈິດວິນຍານເລື່ອນລອຍ ລາວຈະ "ລອຍໄປຕາມກຸ່ມ" ຊຶ່ງແມ່ນຫຍັງກໍຕາມເຂົ້າມາສູ່ຊີວິດລາວຈະຮັບເອົາສິ່ງນັ້ນ. ແຕ່ເປັນໜ້າເສົ້າໃຈ, ເມື່ອເຮົາລອຍໄປຕາມກຸ່ມຊົນເຊັ່ນນັ້ນ ເຮົາຈະພົບວ່າເຮົາໄປບ່ອນທີ່ເຮົາບໍ່ຢາກໄປ.

ຂອບພຣະຄຸນພຣະເຈົ້າພວກເຮົາບໍ່ໄດ້ວາງແຜນເອົາໄວ້ໂດຍທີ່ບໍ່ຮູ້ຫຍັງ ພວກເຮົາມີພຣະທັມຂອງພຣະເຈົ້າເປັນຄຳສອນໃຫ້ດຳລົງຊີວິດຕາມ. ພຣະເຈົ້າໄດ້ຕັດສັ່ງດ້ວຍພຣະທັມຂອງພຣະອົງ-ເພງສັດເສີນ 119 ເປັນຕົວຢ່າງທີ່ພຣະເຈົ້າໄດ້ສະແດງໃຫ້ພວກເຮົາເອົາໄປປະກອບໃຊ້ໃນຊີວິດປະຈຳວັນ.

**ພຣະຄັມພີກ່າວວ່າແນວໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ເພງສັດເສີນ 119:9-11</u>**:

*9 ຊາຍໜຸ່ມຈະຮັກສາທາງຂອງຕົນໃຫ້ບໍຣິສຸດໄດ້ຢ່າງໃດ ໂດຍການເຝົ້າລະວັງຕາມພຣະທັມຂອງພຣະອົງ 10 ຂ້ານ້ອຍ*
*ສແວງຫາພຣະອົງດ້ວຍສຸດໃຈຂອງຂ້ານ້ອຍ ຂໍຢ່າໃຫ້ຂ້ານ້ອຍຫລົງໄປຈາກພຣະບັນຍັດຂອງພຣະອົງ 11 ຂ້ານ້ອຍໄດ້*
*ສະສົມພຣະຄຳສັ່ງຂອງພຣະອົງໄວ້ໃນໃຈຂອງຂ້ານ້ອຍ ເພື່ອຂ້ານ້ອຍຈະບໍ່ເຮັດບາບຕໍ່ພຣະອົງ.*

ໃນຊີວິດຂອງພວກເຮົານັ້ນຫົວໃຈເປັນສິ່ງສຳຄັນ ນັ້ນແຫລະນັກປະພັນເພງສັດເສີນໄດ້ຢ້ຳເຖິງໃນບົດ9:11: ເວົ້າເຖິງຫົວໃຈ. ເພິ່ນຍັງກ່າວເພີ້ມໃນຂໍ້ 9 ວ່າພຣະທັມຂອງພຣະເຈົ້າສາມາດຮັກສາຈິດໃຈພວກເຮົາບໍ່ໃຫ້ເກີດກິເລດຕັນຫາເຂົ້າມາທົດລອງມະນຸດເຮົາທຸກຄົນ (ເບິ່ງ 3:23). ແນ່ນອນມີແຕ່ບ່ອນດຽວແລະຜູ້ດຽວເທົ່ານັ້ນສາມາດຊຳຮະລ້າງຝ່າຍວິນຍານຈິດໄດ້: ຄວາມພົ້ນໄດ້ມາໂດຍການຍອມຕາຍແລະການເປັນຄືນມາຈາກຕາຍຂອງອົງພຣະເຢຊູ. ພຣະ

ຄຳຂອງພຣະເຈົ້າຊີ້ບອກເຮົາໄປຫາພຣະຄຣິດ ຖ້າພວກເຮົາເຮັດຕາມຄວາມຈິງຜ່ານທາງພຣະຄຳ ການດຳເນີນຊີວິດຂອງເຮົາກໍຈະບໍຣິສຸດ.

ຂໍ້ 10 ເພິ່ນໄດ້ໜູນນ້ຳໃຈພວກເຮົາໃຫ້ສແວງຫາພຣະເຈົ້າຢ່າງສຸດໃຈ. ເຮົາບໍ່ອ່ານພຣະຄັມພີພຽງແຕ່ເພື່ອເປັນການສຶກສາຫາຂໍ້ມູນເທົ່ານັ້ນ ແຕ່ຕ້ອງອ່ານພຣະຄັມພີເພື່ອສແວງຫາພຣະເຈົ້າ ໃນເມື່ອເຮັດດັ່ງນີ້ທ່ານຈະໄດ້ພົບກັບຜູ້ປະທານຊີວິດໃຫ້ແກ່ພວກເຮົາ. ຂໍ້ 10 ສອນເຖິງສອງຢ່າງຄືມີຈິດໃຈຢາກຮູ້ຈັກ ແລະຖ່ອມຕົວລົງເພື່ອເພິ່ງອາສັຍພຣະເຈົ້າ ທັງສອງຢ່າງນີ້ຈຳເປັນຕ້ອງມີໃນຊີວິດຂອງຜູ້ທີ່ເຊື່ອ. ພວກເຮົາອາດແປກໃຈວ່າອັນໃດສຳຄັນກວ່າ ແຕ່ໃນເຣື່ອງນີ້ພວກເຮົາຈຳເປັນຕ້ອງອະທິຖານເປັນປະຈຳເພື່ອບໍ່ໃຫ້ຕົກໃນການທົດລອງຂອງມານທີ່ເຮັດຄວາມຜິດບາບຕໍ່ສູ້ພຣະເຈົ້າ.

ສຸດທ້າຍ ຂໍ້ 11 ໄດ້ເຕືອນພວກເຮົາໃຫ້ທ້ອນໂຮມພຣະຄຳຂອງພຣະເຈົ້າໄວ້ໃນໃຈ ເໝືອນຮັກສາຊັບສິນບໍ່ໃຫ້ສູນເສັຽໄປ. ຖືວ່າພຣະຄຳເປັນຂອງມີຄ່າສູງ: ມັກອ່ານ, ມັກຟັງ, ມັກຮຽນ, ມັກທ່ອງຈຳເອົາໄວ້, ແລະມັກຄຶດເຖິງຢູ່ໃນໃຈສເມີ, ເຊື່ອ, ແບ່ງປັນຄົນອື່ນ, ມີຄວາມຍິນດີໃນພຣະຄຳ. ຖ້າພວກເຮົາຮັກສາພຣະຄຳໄວ້ໃນຈິດໃຈ ພຣະຄຳນັ້ນຈະຊ່ອຍໃຫ້ພວກເຮົາເອົາຊະນະຕໍ່ຄວາມຜິດຄວາມບາບ.

*ໃນສອງສາມປີຜ່ານມາ ທ່ານໄດ້ຮັບປໂຍດຈາກພຣະຄຳຂອງພຣະເຈົ້າຢ່າງໃດແດ່?*

## 2. <u>ເພງສັຣເສີນ 119:12-13</u>

*[12] ຂ້າແດ່ພຣະເຈົ້າ ສາທຸການແດ່ພຣະອົງ ຂໍຊົງສອນກົດເກນຂອງພຣະອົງແກ່ຂ້ານ້ອຍ [13] ຂ້ານ້ອຍຈະປະກາດດ້ວຍຮີມປາກຂອງຂ້ານ້ອຍ ເຖິງບັນດາກົດໝາຍແຫ່ງພຣະໂອດຂອງພຣະອົງ.*

ໃນຕົ້ນຂອງບົດນີ້ໄດ້ກ່າວເຖິງພຣະພອນຂອງພຣະເຈົ້າຈະເກີດຜົນໃນຊີວິດຂອງຜູ້ປະຕິບັດຕາມພຣະຄຳຂອງພຣະເຈົ້າ (ເບິ່ງ 1-2) ຕໍ່ມານັກປະພັນເພງສັຣເສີນໄດ້ຍົກຍ້ອງສັຣເສີນພຣະເຈົ້າ. ເພິ່ນຍັງເພີ້ມອີກວ່າໃຜກໍຕາມຍອມຕໍ່ພຣະເຈົ້າແລະເຮັດຕາມພຣະຄຳຂອງພຣະອົງ ແລະຍົກພຣະນາມພຣະອົງໃຫ້ສູງຂຶ້ນກໍເປັນຄົນທີ່ໄດ້ຮັບພຣະພອນ. ເພິ່ນຍັງທູນຂໍຈາກພຣະເຈົ້າໃຫ້ສິດສອນເພິ່ນເພື່ອຈະໄດ້ນະມັສການພຣະອົງຢ່າງຖືກຕ້ອງ. ຖ້າບໍ່ມີຈິດໃຈສັຣເສີນແລະຮູ້ຈັກຄຸນຄ່າຂອງການນະມັສການແລ້ວ ພວກເຮົາກໍບໍ່ມີອັນໃດເຮັດໃຫ້ພຣະເຈົ້າພໍພຣະທັຍ.

ການໄວ້ວາງໃຈແລະສັຣເສີນພຣະເຈົ້າຄືຮັກສາພຣະທັມຂອງພຣະອົງ. ການນະມັສການຂອງນັກປະພັນເພງສັຣເສີນແມ່ນມີຈິດໃຈຢາກໃຫ້ພຣະເຈົ້ານຳພາແລະສິດສອນດ້ວຍພຣະຄຳ. ບໍ່ແມ່ນສິ່ງທີ່ເພິ່ນຢາກຮູ້ເທົ່ານັ້ນ ແຕ່ເພິ່ນໄດ້ແບ່ງປັນພຣະຄຳນັ້ນກັບຄົນອື່ນໆ ການເຮັດຢ່າງນີ້ກໍເປັນການຖວາຍຕົນຕໍ່ພຣະເຈົ້າ ບໍ່ແມ່ນແຕ່ການເຂົ້ານະມັສການພຣະອົງເທົ່ານັ້ນ.

<u>**ໝາຍເຫດ**</u>: ນັກປະພັນເພງສັຣເສີນບໍ່ໄດ້ເລືອກເອົາບາງຂໍ້ໃນພຣະທັມເໝືອນພວກເຮົາໃນທຸກວັນນີ້ ເພິ່ນໄດ້ເວົ້າເຖິງຄວາມຮັກ ແລະການຕັດສິນຂອງພຣະເຈົ້າຕໍ່ທຸກຄົນ. ເໝືອນກັບອາຈານໂປໂລໃນພຣະຄັມພີໃໝ່ ເພິ່ນໄດ້ສິດສອນແຜນການຂອງພຣະເຈົ້າຢ່າງເຕັມແລະຄົບຖ້ວນ (ກຈກ 20:27).

*ແມ່ນຫຍັງທີ່ຊ່ອຍທ່ານໃຫ້ຍຶດໝັ້ນໃນພຣະຄຳພີຢ່າງມີຄວາມໝາຍຕໍ່ຊີວິດ?*

## 3. <u>ເພງສັຣເສີນ 119:14–16</u>:

*[14] ຂ້ານ້ອຍປິຕິຍິນດີໃນທາງແຫ່ງບັນດາພຣະໂອວາດຂອງພຣະອົງຫລາຍເທົ່າກັບຄວາມຮັ່ງມີທັງປວງ [15] ຂ້ານ້ອຍຈະພາວະນາຂໍ້ບັງຄັບຂອງພຣະອົງ ແລະຈັບຕາຂອງຂ້ານ້ອຍໃນວິຖີທາງທັງຫລາຍຂອງພຣະອົງ [16] ຂ້ານ້ອຍຈະປິຕິຍິນດີໃນກົດເກນຂອງພຣະອົງ ຂ້ານ້ອຍຈະບໍ່ລືມພຣະທັມຄຳສັ່ງຂອງພຣະອົງ.*

ທ່ານໄດ້ເຫັນຄວາມຊື່ນຊົມຍິນດີຂອງນັກປະພັນເພງສັຣເສີນບໍ່? ເພິ່ນໄດ້ຮັບຮູ້ວ່າພຣະຄຳຂອງພຣະເຈົ້າເປັນຊັບສິນແລະເປັນການຮັ່ງມີດ້ານຈິດວິນຍານ ເພິ່ນໄດ້ປະກາດເຣື່ອງນີ້ຕລອດໃນບົດເພງສັຣເສີນຊຶ່ງປະກອບດ້ວຍ:

- "ຄຳສັ່ງສອນທີ່ພຣະອົງປະທານໃຫ້ນັ້ນມີຄ່າຫລາຍສຳລັບຂ້ານ້ອຍກວ່າເງິນແລະຄຳພັນແທ່ງ" (ຂໍ້ 72)
- "ຂ້ານ້ອຍຮັກສາຂໍ້ຄຳສັ່ງຂອງພຣະອົງຍິ່ງກວ່າທອງຄຳນ້ຳດີ." (ຂໍ້ 127)

ໃນວັກສຸດທ້າຍຂອງຂໍ້ນີ້ ນັກປະພັນເພງສັຣເສີນສະແດງເຖິງຄວາມສຳຄັນວິທີທີ່ພຣະເຈົ້າໄດ້ຕັດສັ່ງດ້ວຍພຣະຄຳຂອງພຣະອົງ: "ຂ້າພຣະອົງຈະເອົາໃຈໃສ່ຕໍ່ຄຳສັ່ງຂອງພຣະອົງ." ຫລາຍເທື່ອຜູ້ທີ່ເຊື່ອເຂົ້າໃຈຜິດເຖິງການຈົດຈຳພຣະຄຳຂອງພຣະເຈົ້າເອົາໄວ້ ແຕ່ຕ້ອງເຂົ້າໃຈວ່າການເອົາພຣະຄຳມາປະກອບໃຊ້ໃນຊີວິດປະຈຳວັນເຮັດໃຫ້ມີຄວາມຊົມຊື່ນຍິນດີ ແລະເປັນສິ່ງສຳຄັນໃນຊີວິດຂອງຄຣິສຕຽນ.

ມີນັກປະພັນເພງສັຣເສີນອີກຄົນນຶ່ງໄດ້ກ່າວເຖິງການເປັນຄົນຊອບທັມຄື "ຍິນດີໃນຄຳສອນຂອງພຣະເຈົ້າ, ແລະເອົາໃຈໃສ່ທັງກາງເວັນແລະກາງຄືນ" (ພສສ 1:2). ພຣະຄັມພີ ແລະການເອົາໃຈໃສ່ທ່ອງຈຳພຣະຄຳເປັນກົກເຫງົ້າຂອງຄວາມຊົມຊື່ນຍິນດີ.

ຕາມສາສນາພວກຕາເວັນອອກ ເມື່ອເວົ້າເຖິງການສະມາທິ ຫລືການຈົດຈໍ່ແມ່ນການເຮັດໃຫ້ສມອງວ່າງເປົ່າເພື່ອຈະຄົ້ນຫາສິ່ງໃໝ່ທີ່ສິ່ງສັກສິດໄດ້ຝັງໄວ້ຢູ່ໃນຕົນເອງ ນັ້ນເປັນຄວາມຫວັງຜິດ. ແຕ່ອີງຕາມພຣະຄັມພີແລ້ວການສະມາທິນີ້ແມ່ນການຮັບເອົາສິ່ງດີຈາກພຣະເຈົ້າເຂົ້າໃນຈິດໃຈ. ຕອນປາຍຂອງຂໍ້ 15 ໄດ້ສອນເຖິງເຣື່ອງຢ່າງແຈ່ມແຈ້ງດີ.

ຕ້ອງເຂົ້າໃຈວ່າຄຳກອນໃນພາສາເຮັບເຣີບໍ່ໄດ້ສອດຄ່ອງກັນດ້ວຍຄຳເວົ້າ ແຕ່ສອດຄ່ອງກັນດ້ວຍຄວາມນຶກຄິດ. ໝາຍຄວາມວ່າຜູ້ຂຽນໄດ້ເອົາສອງປໂຍກທີ່ຄ້າຍຄືກັນມາເຊື່ອມຕໍ່ສອງຄວາມຄິດເຂົ້າໃສ່ກັນ. ໃນຂໍ້ 15 ຄວາມຄິດທີ່ໄປຄຽງຄູ່ກັນກັບ "ໄຕ່ຕອງ(ພາວະນາ)ເຖິງຫລັກຄຳສອນຂອງພຣະອົງ ແມ່ນຄິດເຖິງທາງຂອງພຣະອົງ."

ການສະມາທິນີ້ປະກອບດ້ວຍຕັ້ງໃຈ, ປັກຕາເຮົາເບິ່ງສິ່ງໃດສິ່ງນຶ່ງດ້ວຍຄວາມຈົດຈໍ່. ຕັ້ງໃຈຢ່າງແນ່ວແນ່ ອຸທິດຖວາຍຕົວຢ່າງໝັ້ນຄົງ. ເມື່ອພວກເຮົາຈົດຈໍ່ຕໍ່ພຣະຄຳຂອງພຣະເຈົ້າ ພຣະຄຳຈະນຳເຮົາໃຫ້ຈົດຈໍ່ໃນພຣະຄຳອັນສູງສຸດຂອງພຣະເຈົ້າຄືອົງພຣະເຢຊູ; ດັ່ງທີ່ຜູ້ຂຽນປຶ້ມເຮັບເຣີໄດ້ກ່າວວ່າ: "ຈົ່ງພາກັນແລ່ນດ້ວຍຄວາມພາກພຽນພະຍາຍາມ, ຈົ່ງປັກຕາເບິ່ງອົງພຣະເຢຊູຜູ້ບຸກເບີກຄວາມເຊື່ອແລະຜູ້ເຮັດໃຫ້ຄວາມເຊື່ອຂອງພວກເຮົາເຖິງທີ່ສຳເຣັດ"(ຮຣ 12:1-2)

ໃນທີ່ສຸດ, ໃຫ້ສັງເກດເບິ່ງປໂຍກທີ່ເວົ້າວ່າ "ຂ້ານ້ອຍຈະ". ນັກປະພັນເພງສັຣເສີນສັນຍາສາມຢ່າງເປັນການຖວາຍຕົວເພື່ອອຸທິດຖວາຍຕົນຕໍ່ພຣະຄຳຂອງພຣະເຈົ້າ:

1. "ຂ້ານ້ອຍຈະໄຕ່ຕອງ(ສະມາທິ)ຕໍ່ຄຳສອນຂອງພຣະອົງ"
2. "ຂ້ານ້ອຍຈະຄິດເຖິງທິດທາງຂອງພຣະອົງ"
3. "ຂ້ານ້ອຍຈະຍິນດີໃນພຣະໂອວາດຂອງພຣະອົງ"

ຍັງມີຄຳສັນຍາທີ່ເປັນທາງລົບອັນນຶ່ງຊຶ່ງນັກປະພັນເພງສັຣເສີນໄດ້ຍົກເອົາມາກ່າວຄື "ຂ້ານ້ອຍຈະບໍ່ຫລົງລືມພຣະຄຳຂອງພຣະອົງ." ຢາໂກໂບກໍໄດ້ກ່າວຢ່າງນີ້ເໝືອນກັນວ່າ "ແຕ່ຜູ້ພິຈາຣະນາເບິ່ງພຣະບັນຍັດອັນດີທີ່ສຸດ ຊຶ່ງເປັນ

ພຣະບັນຍັດທີ່ໃຫ້ມີເສຣີພາບ ແລະຕັ້ງຢູ່ໃນພຣະທັມບັດຍັດນັ້ນ ຜູ້ນັ້ນບໍ່ເປັນຜູ້ໄດ້ຍິນແລ້ວຫລົງລືມໄປແຕ່ເປັນຜູ້ຂັບຕາມ ຜູ້ນັ້ນແຫລະຈະໄດ້ຮັບຄວາມສຸກຕາມກິຈການຂອງຕົນ." (ຢກບ 1:25).

ໃນຖານະເປັນຜູ້ທີ່ເຊື່ອໃນພຣະເຈົ້າພວກເຮົາບໍ່ຄວນເອົາສິ່ງໃດມາເປັນກຳແພງກັ້ນບໍ່ໃຫ້ອ່ານ, ຮູ້ຈັກ, ແລະຂັບຕາມພຣະຄຳຂອງພຣະເຈົ້າ. ໃຫ້ເຮົາເອົາຄຳສາຣະພາບຂອງທ່ານໂຢບມາປະກອບໃຊ້: "ຂ້ານ້ອຍບໍ່ໄດ້ໜີໄປຈາກພຣະບັນຍັດແຫ່ງຮີມພຣະໂອດຂອງພຣະອົງ ຂ້ານ້ອຍຕີຣາຄາພຣະຄຳພຣະອົງສູງກວ່າອາຫານປະຈຳວັນຂອງຂ້ານ້ອຍ. (ໂຢບ 23:12)

| |
|---|
| ແທນທີ່ຈະຮູ້ຈັກພຣະຄຳພຽງເທົ່ານັ້ນ ເຮົາໄດ້ຮັບການປ່ຽນແປງຢ່າງໃດຈາກພຣະຄຳຂອງພຣະເຈົ້າ? |

## ນຳໃຊ້ໃນຊີວິດ

ທ່ານຈະມີວິທີເຮັດຢ່າງໃດເພື່ອໃຫ້ຈິດໃຈຂອງທ່ານເຕັມລົ້ນໄປດ້ວຍພຣະຄຳຂອງພຣະເຈົ້າໃນອາທິດນີ້? ໃຫ້ພິຈາຣະນາຄຳແນະນຳຕໍ່ລົງໄປນີ້:

- **ອ່ານພຣະຄັມພີທຸກວັນ**. ແຜນການສຶກສາພຣະຄັມພີມີຫລາຍຢ່າງ ເລືອກເອົາອັນທີ່ເໝາະສົມກັບທ່ານ, ແລະເລີ່ມເຂົ້າເຝົ້າພຣະເຈົ້າທຸກວັນດ້ວຍການອະທິຖານແລະອ່ານພຣະຄັມພີ. ເຖິງຈະບໍ່ມີເວລາຫລາຍກໍຂໍໃຫ້ເລີ້ມຕົ້ນລົງມືເຮັດໄປກ່ອນ.
- **ເຈາະໃຫ້ເລິກເພື່ອຈະເຕີບໃຫຍ່ຂຶ້ນ.** ມີສ່ວນໃດໃນຊີວິດຂອງທ່ານບໍ່ທີ່ຢາກຈະປ່ຽນແປງຫລືຢາກເຕີບໃຫຍ່ຂຶ້ນ? ເຈາະເລິກລົງໃນພຣະຄຳຂອງພຣະເຈົ້າທີ່ກ່ຽວຂ້ອງກັບພາກສ່ວນນັ້ນຂອງທ່ານ. ແລ້ວຍອມຮັບຄວາມຈິງຂອງພຣະຄຳພຣະເຈົ້າ. ຍອມເຊື່ອຟັງຄຳສັ່ງຂອງພຣະອົງ ໄວ້ວາງໃຈໃນຄຳສັນຍາຂອງພຣະອົງ..
- **ສ້າງຜູ້ເຊື່ອໃໝ່ໃຫ້ເປັນສາວົກ.** ມີທາງນຶ່ງທີ່ຈະມີວິນັຍໃນການອ່ານແລະສຶກສາພຣະຄຳຂອງພຣະເຈົ້າແມ່ນການຊ່ອຍ(ລົງທຶນໃນ)ຄົນອື່ນ. ທ່ານອາດຈະຮູ້ສຶກວ່າທ່ານບໍ່ມີຄວາມຮູ້ຫລາຍ ແຕ່ທ່ານສາມາດຮຽນໄປນຳໃນຂະນະທີ່ທ່ານຍ່າງຄຽງຂ້າງກັບຄົນໃດຄົນນຶ່ງແລະຊ່ອຍລາວໃຫ້ຮຽນຮູ້ຫລາຍຂຶ້ນ.

ອາດຈະແປກປລາດທີ່ຄິດວ່າພຣະຄັມພີເປັນແຫລ່ງແຫ່ງແສງສວ່າງ ບາງຄົນຍັງຄິດວ່າການຍອມເຊື່ອຟັງເປັນທາງໄປສູ່ຄວາມຊົມຊື່ນຍິນດີ. ຜູ້ຂຽນພຣະທັມເພງສັຣເສີນ 119 ຮູ້ຈັກຄວາມຈິງໃນຖ້ອຍຄຳດັ່ງກ່າວນັ້ນ, ທ່ານກໍສາມາດຮູ້ໄດ້ຄືກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BV**